*ຖະແຫລງການ* *ປາຣີ 26 ຕຸລາ 2015*

# *ຄົບຮອບ 16 ປີ ແຮ່ງ ຂະບວນ ລຸກຮື້ 26 ຕຸລາ 1999*

ຂະບວນການ ລາວ ເພື່ອ ສິດທິ ມະນຸດ (ຂລສມ) ສະແດງ ຄວາມ ວິຕົກ ກັງວົນ ເປັນ ຢ່າງຍິ່ງ ຕໍ່ ຊາຕາກັມ ຂອງ ຜູ້ນໍາ ຂະບວນ ລຸກ ຮື້ 26 ຕຸລາ 1999 ທີ່ ຖືກ ຈັບຕົວ ເປັນ ເວລາ 16 ປີ ຜ່ານມາ - ຫລື 5840 ວັນ - ໃນ ຂະນະ ຕຽມການ ປະທ້ວງ ໂດຍ ສັນຕິ ວິທີ ທີ່ ນະຄອນຫລວງ ວຽງຈັນ ເພື່ອ ຮຽກຫອງ ເອົາ ຄວາມ ຍຸດຕິທັມ ດ້ານ ສັງຄົມ, ການ ປະຕິຮູບ ສູ່ ເສັ້ນທາງ ປະຊາທິປະໄຕ ແລະ ການ ນັບຖື ສິດທິ ມະນຸດ.

ທ່ານ ທອງປະເສີດ ເກື້ອກູນ, ນຶ່ງ ໃນ ຄະນະ ຜູ້ນໍາ ຂະບວນການ, ອາດ ຍັງມີ ຊີວິດ ຢູ່ ໃນ ຄຸກ ຊໍາເຄ້, ນະຄອນ ວຽງຈັນ, ຢູ່ໃນ ສະພາບ ຢ່າງ ໄຮ້ ມະນຸສທັມ ໂດຍ ສອງຂ້າ ຖືກ ໜີບໃສ່ ກະບອກ ໄມ້ ຕລອດ ເວລາ. ໃນຈໍານວນ 5 ຄົນ, ຄາດວ່າ ອາດຈະມີ ຊີວິດ ຢູ່ ພຽງ 2 ຄົນ. ພວກ ເຮົາ ບໍ່ຊາບ ວ່າ ຜູ້ ທີ່ ສອງ ທີ່ ຍັງມີ ຊີວິດ ລອດ ຢູນັ້ນ ແມ່ນ ແສງອາລຸນ ແພງພັນ ຫລື ບົວວັນ ຈັນມານີວົງ ຫລື ແກ້ວໃຈ. ສ່ວນ ຄໍາພູວຽງ ສີສະອາດ ນັ້ນ ໃດ້ ເສັຍ ຊີວິດ ໄປແລ້ວ ເມື່ອປີ 2001 ຫລັງຈາກ ທີ່ ຖືກ ທໍຣະມານ.

ສປປ ລາວ ຍັງ ສືບຕໍ່ ຕົວະ ປະຊາຄົມ ສາກົນ ກ່ຽວກັບ ກໍຣະນີ ຄະນະ ຜູ້ນໍາ ຂະບວນການ ລຸກຮື້ 26 ຕຸລາ 1999 ພອ້ມ ຍັງໃດ້ ປະຕິເສດ ບໍ່ຍອມ ຮັບວ່າ ໃດ້ ຈັບຕົວ ອີກ 9 ຄົນ ເມື່ອ ວັນທີ່ 2 ເດືອນ ພືສະຈິກາ 2009. ໃນນັ້ນ ມີ ນາງ ກິ່ງແກ້ວ, ນາງ ສົມຈິດ, ທ້າວ ສູ່ບິນ, ສອນ, ສີງປະສົງ, ໜູ, ສົມຄິດ ແລະ ສູວິຍາ ຊຶ່ງ ກໍາລັງ ຕຽມການ ປະທ້ວງ ແບບ ສັນຕິວິທີ ຮຽກທອງ ຍຸຕິທັມ ດ້ານ ສັງຄົມ ແລະ ການ ເຄົາຣົບ ສິດທິ ມະນຸດ. ສປປ ລາວ ຍັງ ດູມິ່ນ ແລະ ເມີນເສີຍ ເສັ້ນດ່ຽວກັນ ຕໍ່ ກໍຣະນີ ທ່ານ ສົມບັດ ສົມພອນ ຜູ່ນໍາ ຊື່ດັງ ຂອງ ອົງການ ສັງຄົມ

ພົວະເຮືອນ ທີ່ ຫາຍສາບສູນ ຕໍ່ໜ້າ ຕໍ່ຕາ ຂອງ ເຈົ້າໜ້າທີ່  ຕໍ່າຣວດ ເມື່ອ ວັນທີ່ 15 ກັນຍາ 2012.

ເນື່ອງໃນ ໂອກາດ ວັນ ຄົບຮອບ 16 ປີ ຂອງ ຂະບວນ ວຸກຣີ້  26 ຕຸລາ 1999 ຂະບວນການ ລາວ ເພື່ອ ສິດທິ ມະນຸດ ຮຽກຮອ້ງ ອີກ ຄັ້ງ ໃໝ່ ຕໍ່ ປະຊາຄົມ ສາກົນ ໂດຍ ສະເພາະ ຕໍ່ ສະຫະພາບ ຢູໂຣບ ໃຫ້ ທຳການ ກົດດັນ ໃຫ້ ສປປ ລາວ ປອ່ຍ ຕົວ ຜູ້ຖືກຈັບ ແລະ ຜູ້ ທີ່ ຫາຍສາບສູນ ທັງໝົດ.
ຂະບວນການ ລາວ ເພື່ອ ສິດທິ ມະນຸດ ຮຽກທວງ ໃຫ້ ສະຫະພາບ ຢູໂຣບ ສວຍໄຊ້ ເງື່ອນໄຂ ຂອງ ສັນຍາ ເສຖກິດ ແລະ ການເມືອງ ເພື່ອ ພັກດັນ ໃຫ້ ທາງການ ສປປ ລາວ ພັທະນາ ສະຖານະພາບ ດ້ານ ສິດທິ ມະນຸດ ໃນ ປະເທດ ໃຫ້ ດີຂື້ນ.